# ໜັງສືເຮັບເຣີ

ໃຈຄວາມສຳຄັນ ເຖິງຄວາມພົ້ນດ້ວຍອົງພຣະຄຣິດ

ຈຳນວນບົດ ໑໓ ບົດ

ໜັງສືເຮັບເຣີເປັນໜັງສືພິເສດຊຶ່ງແຕກຕ່າງກັບໜັງສືອື່ນ ໆ ແລະ ມີບັນຫາວ່າໃຜເປັນຜູ້ຂຽນໜັງສືນີ້ ໄດ້ຂຽນໄປຫາຜູ້ໃດ ແລະມີຈຸດປະສົງຢ່າງໃດແດ່ ພວກຄຣູສອນທັງຫລາຍກໍມີຄວາມເຫັນບໍ່ຄືກັນ ຄືຕ່າງຄົນຕ່າງຄິດຕ່າງຄົນຕ່າງເຂົ້າໃຈ ສຳລັບພວກເຮົາເອງກໍບໍ່ຮູ້ຄັກວ່າ ໃຜເປັນຜູ້ຂຽນໜັງສືນີ້ ມີຫລາຍຄົນຄິດວ່າ ແມ່ນທ່ານໂປໂລເປັນຜູ້ຂຽນ ມີຜູ້ລາງຄົນຄິດວ່າແມ່ນທ່ານອາໂປໂລເປັນຜູ້ຂຽນ ຄົນອື່ນ ໆ ບາງຄົນກໍວ່າແມ່ນທ່ານບາຣະນາບາ ຫລືບໍ່ກໍແມ່ນທ່ານລູກາ ແຕ່ບໍ່ມີຜູ້ໃດທີ່ຮູ້ຈັກຄັກ ສະນັ້ນຈຶ່ງເປັນໜັງສືພິເສດແທ້ ເພາະວ່າຜູ້ຂຽນບໍ່ໄດ້ອອກຊື່ ແລະບໍ່ໄດ້ສະແດງຄວາມຄຳນັບຕາມທີ່ໄດ້ເຫັນມາ ແຕ່ຢ່າງໃດກໍດີ ພວກເຮົາເຊື່ອແນ່ວ່າ ພຣະ ວິນຍານ ບໍຣິສຸດ ຊົງ ນຳພາ ໃຫ້ ຜູ້ຂຽນ ໆ ໄປ ຕາມ ນ້ຳ ພຣະໄທ ຂອງ ພຣະເຈົ້າ

## ວ່າດ້ວຍຜູ້ອ່ານໜັງສືນີ້

ໜັງສືນີ້ຂຽນໄປຫາພວກຢູດາທີ່ຮູ້ຈັກພຣະຄຳພີເດີມ (໑:໑) ຄົນພວກນີ້ເຄີຍໄດ້ຍິນຂ່າວປະເສີດແລະເຊື່ອພຣະເຢຊູແລ້ວ (໕:໑໒–໑໔) ແຕ່ພວກເຂົາບໍ່ໄດ້ມີຄວາມເຊື່ອເພີ່ມເຕີມຂຶ້ນເລີຍ ເພາະວ່າຖືກຂົ່ມເຫັງ

ແລະຣົບກວນຢ່າງໜັກ ຈົນພວກເຂົາຄິດຢາກຈະອອກຈາກສາສນາພຣະເຢຊູ ຄືນໄປເຂົ້າສາສນາຢູດາອີກ (໖:໑–໓) ສຳລັບບ່ອນຢູ່ຂອງພວກເຂົານັ້ນ ພວກເຮົາບໍ່ຮູ້ຈັກເພາະຜູ້ຂຽນໄດ້ບອກແຕ່ພຽງວ່າຢາກໄປຢາມພວກເຂົາ (໑໓:໑໙,໒໓)

## ວ່າດ້ວຍເວລາແລະໂອກາດທີ່ຂຽນ

ພວກຄຣູສອນສ່ວນຫລາຍເຂົ້າໃຈວ່າ ໜັງສືນີ້ໄດ້ຂຽນກ່ອນກຸງເຢຣູຊາເລັມຖືກທຳລາຍ ຄືໃນປີ ຄ.ສ. ໗໐ ເພາະຜູ້ຂຽນຍັງໄດ້ເວົ້າເຣື່ອງວິຫານແລະເຣື່ອງເຄື່ອງບູຊາຂອງພວກຢູດາຢູ່ ຖ້າຫາກຂຽນພາຍຫລັງກຸງເຢຣູຊາເລັມທຳລາຍແລ້ວ ຜູ້ຂຽນຄົງຈະບໍ່ເວົ້າເຖິງເຄື່ອງບູຊາແລະເຣື່ອງວິຫານເລີຍ ໘:໓

ພວກເຮົາເຂົ້າໃຈວ່າ ພວກຄຣິສຕຽນມີຄວາມລຳບາກແລະຖືກຂົ່ມເຫັງເມື່ອປີ ຄ.ສ. ໖໕ ແຕ່ເນື້ອຄວາມທີ່ມີຢູ່ໃນໜັງສືບອກໃຫ້ຮູ້ວ່າອັນຕຣາຍແລະການຂົ່ມເຫັງນັ້ນຍັງບໍ່ທັນມີ (໑໒:໔) ພຽງແຕ່ບອກວ່າໃກ້ຈະເກີດມີແລ້ວ (໘:໑໓,໑໐,໒໕; ໑໒:໒໖) ດັ່ງນັ້ນພວກເຮົາຈຶ່ງຄິດວ່າ ໜັງສືນີ້ໄດ້ຂຽນຣະຫວ່າງປີ ຄ.ສ. ໖໔ ຫລື ໖໕

ອັນນຶ່ງ ພວກເຮົາຮູ້ແລ້ວວ່າ ຜູ້ທີ່ຮັບໜັງສືນີ້ຄືຊາວຢູດາທີ່ອອກມາຈາກສາສນາຢູດາ ແລະອອກຈາກຄຳສັນຍາເດີມ ເພື່ອມາເຂົ້າສາສນາພຣະເຢຊູ ແຕ່ສາສນາຢູດາກໍຍັງມີຢູ່ ສະນັ້ນພວກຟາຣີຊຽນແລະພວກນັກທັມ ຈຶ່ງພາກັນຕໍ່ສູ້ສາສນາພຣະເຢຊູຢ່າງໜັກ ໂດຍພວກເຂົາໄດ້ປະມາດພຣະນາມພຣະເຢຊູ ແລະປະມາດພວກຄຣິສຕຽນ ພວກເຂົາໄດ້

ຫາອຸບາຍຫລອກລວງໂຈມຕີພວກຄຣິສຕຽນ ຄືພວກເຂົາເວົ້າວ່າ ຄົນພວກນີ້ໄດ້ປະຖິ້ມພຣະບັນຍັດແລະຄຳສັນຍາເດີມ ແລ້ວໄດ້ຕິດຕາມໄປເຊື່ອພຣະເຢຊູ

ດ້ວຍຄຳຫລອກລວງຂອງພວກເຂົາດັ່ງນີ້ ພວກເຮັບເຣີຈຶ່ງເກີດການງຸ້ນວາຍແລະຄິດຈະລາອອກສາສນາພຣະເຢຊູ ສະນັ້ນຜູ້ຂຽນໜັງສືນີ້ຈຶ່ງໄດ້ຕັກເຕືອນພວກເຮັບເຣີຢ່າງຮຸນແຮງ (໖:໔–໖; ໑໐:໒໖–໓໑) ເພື່ອໃຫ້ພວກເຂົາຣະວັງແລະອົດທົນຕໍ່ໄປ

## ວ່າດ້ວຍຄວາມມຸ່ງໝາຍ

໑. ເພື່ອບອກສອນແລະຕັກເຕືອນໃຈພວກເຮັບເຣີ ໃຫ້ຣະມັດຣະວັງ ໃຫ້ເອົາໃຈໃສ່ໃນຄວາມເຊື່ອແລະບໍ່ໃຫ້ປະຄຳສັນຍາໃໝ່

໒. ເພື່ອສອນພວກເຂົາວ່າ ການປະພຶດຕາມຄຳສັນຍາເດີມຕາມໂມເຊນັ້ນ ເປັນພຽງເງົາຂອງຄວາມຈິງເທົ່ານັ້ນ ຈະບໍ່ເຖິງພຣະເຢຊູ ຈະໄດ້ຮັບປະໂຍດຊົ່ວຄາວເທົ່ານັ້ນ

໓. ເພື່ອພິສູດຄວາມຈິງໃຫ້ພວກເຂົາເຫັນວ່າ ພຣະເຢຊູຜູ້ຍິ່ງໃຫຍ່ກວ່າ ແລະປະເສີດກວ່າຂອງເດີມທັງໝົດ

## ວ່າດ້ວຍເນື້ອຄວາມ

ໄດ້ບອກແລ້ວວ່າໜັງສືເຮັບເຣີເປັນໜັງສືພິເສດແລະສຳຄັນຫລາຍ ສະນັ້ນເນື້ອຄວາມຂອງໜັງສືນີ້ຈຶ່ງນ່າຮຽນໜ້າສົນໃຈທີ່ສຸດ ຈຶ່ງໄດ້ຮວບຮວມເປັນຫົວຂໍ້ໄວ້ເພື່ອໃຫ້ເຂົ້າໃຈງ່າຍດັ່ງນີ້

໑. ການປະພຶດຕາມຢ່າງພວກເລວີນັ້ນເປັນປະໂຍດແຕ່ຊົ່ວຄາວ ບໍ່ຢັ້ງຍືນຖາວອນ (໑໒:໒໗) ການບົງຣະບັດຂາບໄຫວ້ເປັນພຽງເງົາຂອງສິ່ງທັງປວງໃນຟ້າສວັນ (໘:໕; ໙:໒໔) ເພາະຄຳສັນຍາເດີມໄດ້ສະແດງແຕ່ເງົາຂອງສິ່ງທີ່ຕັ້ງຢູ່ເປັນນິດ ແຕ່ບັດນີ້ຄຳສັນຍາໃໝ່ໄດ້ຊົງໂຜດໃຫ້ເຫັນຕົວຈິງແທ້ ຄືຊົງໂຜດໃຫ້ເຫັນບ່ອນພັກພາອາໄສທີ່ແທ້ຈິງ (໘:໒) ເປັນເມືອງທີ່ມີຮາກໜາແໜ້ນໝັ້ນຄົງ (໑໑:໑໐) ເປັນອານາຈັກທີ່ບໍ່ຫວັ່ນໄຫວ (໑໒:໒໘) ແລະໃຫ້ເຫັນເມືອງເຢຣູ-ຊາເລັມໃໝ່ຢູ່ເທິງຟ້າສວັນ ໑໒:໒໒

໒. ພຣະຄຣິດຊົງປະເສີດແລະຍິ່ງໃຫຍ່ກວ່າທຸກສິ່ງ ເພາະທຸກສິ່ງໄດ້ສຳເຣັດແລ້ວໃນພຣະຄຣິດ (໑:໑–໔) ພຣະຄຣິສຕະສາສນາບໍ່ໄດ້ຕັ້ງຂຶ້ນເພື່ອໃຫ້ປະຖິ້ມຄຳສັນຍາເດີມ ແຕ່ໄດ້ຕັ້ງຂຶ້ນເພື່ອໃຫ້ຂອງເດີມເຫລົ່ານັ້ນເຖິງທີ່ສຳເຣັດ ສະນັ້ນພຣະຄຣິດຊົງໃຫຍ່ກວ່າພວກເທວະດາ ໃຫຍ່ກວ່າໂມເຊ ໃຫຍ່ກວ່າໂຢຊວຍ ໃຫຍ່ກວ່າປະໂລຫິດອາໂຣນ ໃຫຍ່ກວ່າເມັດຄີເຊເດັກ ແລະສຳຄັນກວ່າເຄື່ອງບູຊາທັງປວງ ຄຳສັນຍາໃໝ່ກໍໃຫຍ່ກວ່າຄຳສັນຍາເດີມເພາະຄຳສັນຍາໃໝ່ໄດ້ຕັ້ງຢູ່ດ້ວຍພຣະຄຣິດ

໓. ພຣະຄຣິດຊົງເປັນໃຫຍ່ກວ່າອາໂຣນແລະຍິ່ງໃຫຍ່ກວ່າເຄື່ອງບູຊາຂອງເພີ່ນ ເພາະວ່າ ອາໂຣນ :

– ອາໂຣນຖວາຍເຄື່ອງບູຊາສຳລັບຕົນເອງ ແລະຊົ່ວຄາວດຽວ ບົດ ໙:໗

– ອາໂຣນບົວຣະບັດໃນຫ້ອງບໍຣິສຸດໃນວິຫານ (໙:໗) ແຕ່ພຣະຄຣິດຈຶ່ງບົວຣະບັດທີ່ຟ້າສວັນ ບົດ ໙:໒໔

– ອາໂຣນບໍ່ໄດ້ເອົາໂລຫິດຂອງຕົນເອງເຂົ້າໄປບູຊາ (໙:໒໕) ແຕ່ພຣະເຢຊູຈຶ່ງເອົາໂລຫິດຂອງຕົນເອງ ບົດ ໙:໑໒

– ເຄື່ອງບູຊາຂອງອາໂຣນມີອຳນາດແຕ່ຊົ່ວຄາວເທົ່ານັ້ນ – ສ່ວນໂລຫິດຂອງພຣະຄຣິດຈຶ່ງມີຢູ່ເປັນນິດ ບົດ ໙:໗,໒໕,໑໒,໒໕–໒໖; ໑໐:໑໒

– ເຄື່ອງບູຊາຊຳຣະບາບມະນຸດບໍ່ໄດ້ – ແຕ່ໂລຫິດຂອງພຣະຄຣິດຈຶ່ງຊຳຣະລ້າງໄດ້ ບົດ ໑໐:໑,໔,໑໑,໑໘; ໙:໒໖

– ເຄື່ອງບູຊາຂອງອາໂຣນຕ້ອງນຳມາຖວາຍທຸກວັນ – ແຕ່ໂລຫິດຂອງພຣະຄຣິດຖວາຍແຕ່ເທື່ອດຽວ ບົດ ໑໐:໑໑–໑໒

໔. ພຣະຄຣິດຈຶ່ງອະໄພໂທດແລະບາບໃຫ້ແກ່ພວກເຮົາ (໘:໑໒; ໙:໒໒) ຈຶ່ງໃຫ້ພວກເຮົາຕັ້ງຢູ່ໃນຄວາມບໍຣິສຸດ (໙:໒໘; ໑໐:໑໐,໑໔) ຈຶ່ງເປັນຊ່ອງທາງໃຫ້ເຂົ້າໄປເຖິງບ່ອນບໍຣິສຸດຂອງພຣະເຈົ້າ (໑໐:໑໙) ແລະຈຶ່ງເຊີນພວກເຮົາໃຫ້ມາຮັບເອົາຄວາມພົ້ນ ບົດ ໔:໑໑,໑໖; ໑໐:໒໒,໒໓ ໑໒:໑-໒,໑໔

໕. ຄວາມຣະມັດຣະວັງ – ດ້ວຍເຫັນວ່າພຣະຄຣິດຈຶ່ງໃຫຍ່ກວ່າສິ່ງທັງປວງ ແລະດ້ວຍເຫັນວ່າຄຳສັນຍາໃໝ່ດີກວ່າຂອງເດີມ ຜູ້ຂຽນຈຶ່ງໄດ້ຕັກເຕືອນພວກເຮັບເຣີ ບໍ່ໃຫ້ຫລົງໄປຈາກຄວາມເຊື່ອ ເພີ່ນໄດ້ຕັກເຕືອນ ຜູ້ທີ່ຍັງບໍ່ໄດ້ຮັບຄວາມພົ້ນ (໒:໑-໓) ຜູ້ທີ່ບໍ່ເຊື່ອຟັງ

(໓:໑໒–໑໓) ຜູ້ທີ່ຈະໄປບໍ່ເຖິງ (໔:໑) ຜູ້ທີ່ຫລົງທາງ (໖:໔–໘) ຜູ້ທີ່ທຳຜິດ (໑໐:໒໖–໓໑) ຜູ້ມີຄວາມລຳບາກ (໑໒:໔–໑໑) ແລະຜູ້ທີ່ສັດຊື່ (ບົດ ໑໓:໑໓–໑໖)

## ການແບ່ງເປັນພາກ

### ພາກທີ ໑ ວ່າດ້ວຍກິຈການແລະຄຳສອນກ່ຽວກັບອົງພຣະຄຣິດ ບົດ ໑:໑–໑໐:໑໘

ກ. ຄວາມຍິ່ງໃຫຍ່ຂອງອົງພຣະຄຣິດ ຄວາມຣະມັດຣະວັງ

໑. ພຣະຄຣິດຊົງໃຫຍ່ກວ່າເທວະດາ ໑:໔–໒:໑໘

ຄ້ຽງທີ ໑ ໒:໑–໔

໒. ພຣະຄຣິດຊົງໃຫຍ່ກວ່າໂມເຊ ໓:໑–໖

ຄ້ຽງທີ ໒ ໓:໗–໑໙

໓. ພຣະຄຣິດຊົງໃຫຍ່ກວ່າໂຢຊູອຍ ໔:໑–໑໐

ຄ້ຽງທີ ໓ ໔:໑໑–໑໓

໔. ພຣະຄຣິດຊົງໃຫຍ່ກວ່າອາໂຣນ ໔:໑໔–໕:໑໐

ຄ້ຽງທີ ໔ ໕:໑໑–໖:໒໐

໕. ພຣະຄຣິດຊົງໃຫຍ່ກວ່າເມັລກີເຊເດັກ ໗:໑–໒໘

ຂ. ການປຽບທຽບອົງພຣະຄຣິດກັບສິ່ງອື່ນໆ ບົດ ໘–໑໐

໑. ພຣະຄຣິດກັບບ່ອນບໍຣິສຸດ ໘:໑–໖

໒. ພຣະຄຣິດກັບຄຳສັນຍາເດີມ ໘:໗–໑໓

໓. ພຣະຄຣິດກັບທີ່ຢູ່ອາໄສ ໙:໑–໑໐

໔. ພຣະຄຣິດກັບການຍົກບາບ ໙:໑໑–໒໘

໕. ພຣະຄຣິດກັບເຄື່ອງບູຊາ ໑໐:໑–໑໘

ພາກທີ ໒ ວ່າດ້ວຍຄຳຕັກເຕືອນຕ່າງໆ ບົດ ໑໐:໑໙–໓໙

໑. ຄຳຕັກເຕືອນໃຫ້ເຂົ້າເຖິງບ່ອນບໍຣິສຸດ ແລະໃຫ້ຮ່ວມໃຈກັນ ບົດ ໑໐:໑໙–໒໕

໒. ຄຳຕັກເຕືອນໃຫ້ມີຄວາມພາກພຽນ ແລະໃຫ້ຕັ້ງໝັ້ນຄົງຢູ່ ບົດ ໑໐:໒໖–໓໙

ພາກທີ ໓ ວ່າດ້ວຍການດຳເນີນຊີວິດ ບົດ ໑໑–໑໓

໑. ຄວາມເຊື່ອຂອງຄົນບູຮານ ບົດ ໑໑

໒. ຄວາມພາກພຽນແລະຄວາມຫວັງ ບົດ ໑໒:໑–໒໙

໓. ຄວາມຮັກ ບົດ ໑໓:໑–໒໑

໔. ຄຳສຸດທ້າຍ ບົດ ໑໓:໒໒–໒໕


## ວ່າດ້ວຍໜັງສືທີ່ຂຽນເຖິງຄຣິສຕະຈັກທົ່ວໄປ

ມີໜັງສືຢູ່ຈຳນວນໜຶ່ງທີ່ຂຽນເຖິງຄຣິສຕະຈັກທົ່ວໄປ ໂດຍບໍ່ໄດ້ບອກວ່າຂຽນເຖິງຜູ້ນັ້ນຜູ້ນີ້ ໜັງສືເຫລົ່ານີ້ມີຢູ່ເຈັດສະບັບ ແຕ່ລະສະບັບກໍໄດ້ເອີ້ນຊື່ຕາມຜູ້ຂຽນເອງ ຄື

໑. ຢາໂກໂບ ຜູ້ເປັນນ້ອງຊາຍຂອງພຣະເຢຊູ ໄດ້ຂຽນ ໑ ສະບັບ

໒. ເປໂຕ ອັຄສາວົກໄດ້ຂຽນ ໒ ສະບັບ

໓. ໂຢຮັນ ອັດສາວົກໄດ້ຂຽນ ໓ ສະບັບ

໔. ຢູດາ ຜູ້ເປັນນ້ອງຊາຍຂອງພຣະເຢຊູ ໄດ້ຂຽນ ໑ ສະບັບ

## ຂໍ້ແຕກຕ່າງລະຫວ່າງຜູ້ຂຽນໜັງສືກໍມີດັ່ງນີ້

໑. ຢາໂກໂບໄດ້ຂຽນກ່ຽວກັບຄຳອ້ອນວອນແລະການດຳເນີນຊີວິດ ຂອງຄົນຄຣິສຕຽນ

໒. ເປໂຕໄດ້ຂຽນກ່ຽວກັບຄວາມຫວັງແລະການຖືກຂົ່ມເຫັງ

໓. ໂຢຮັນໄດ້ຂຽນກ່ຽວກັບຄວາມຮັກແລະຄວາມຈິງ

໔. ຢູດາໄດ້ຂຽນກ່ຽວກັບຄວາມເຊື່ອແລະການຕໍ່ສູ້ກັບຄວາມຊົ່ວ